# **ຄຳແນະນຳ** ໃນການຈົດຊື່ລົງທະບຽນ ແລະ ການ ປ່ອນບັດເລືອກຕັ້ງ

ໃນຖານະເປັນຄົນອອັສເຕຣລຽນທີ່ມີອາຍຸ18 ປີ ຫຼື ຫຼາຍກວ່າ ທ່ານມີສິດແລະຄວາມຮັບຜິດຊອບໃນ ການຈົດຊື່ລົງທະບຽນ ແລະ ການປ່ອນບັດເລືອກຕັ້ງໃນການເລືອກຕັ້ງຂອງຣັຖບານກາງ. ການຈົດຊື່ ລົງທະບຽນ ແລະ ການປ່ອນບັດເລືອກຕັ້ງແມ່ນເປັນການບັງຄັບ.  ຖ້າທ່ານບໍ່ປ່ອນບັດເລືອກຕັ້ງ, ທ່ານ ອາດຈະຖືກປັບໃໝ.

## ພວກເຮົາຈະຊ່ວຍທ່ານໄດ້ຢ່າງໃດ?

ຄະນະກຳມາທິການກຳກັບການເລືອກຕັ້ງແຫ່ງອອັສເຕຣເລັຍ (AEC) ມີໜ້າທີ່ຮັບຜິດຊອບໃນການເກັບຮັກສາບັນຊີລາຍຊື່ຜູ້ປ່ອນບັດ ແລະຈັດການເລືອກຕັ້ງຂອງຣັຖບານກາງ, ທັງການເລືອກຕັ້ງກ່ອນສະໄໝ ແລະ ແບບປະຊາມະຕິ.

AEC ບໍ່ຈັດການເລືອກຕັ້ງຂອງຣັຖບານຂັ້ນຣັດ, ອານາເຂດ ຫຼື ຣັຖບານທ້ອງຖິ່ນ. ການເລືອກຕັ້ງເຫຼົ່ານີ້ແມ່ນຫ້ອງ ການກຳການເລືອກຕັ້ງອື່ນໆເປັນຜູ້ຈັດ.

## ການຈົດຊື່

ກ່ອນທີ່ທ່ານຈະສາມາດປ່ອນບັດເລືອກຕັ້ງໄດ້, ຊື່ຂອງ ທ່ານຕ້ອງຢູ່ໃນບັນຊີລາຍຊື່ຜູ້ປ່ອນບັດ. ບັນຊີລາຍຊື່ຜູ້ປ່ອນບັດແມ່ນບັນຊີຂອງພົລເມືອງທີ່ມີສິດທຸກໆຄົນທີ່ໄດ້ຈົດຊື່ລົງທະບຽນ ເພື່ອປ່ອນບັດເລືອກຕັ້ງໃນການເລືອກຕັ້ງຂອງຣັຖບານກາງແລະການລົງປະຊາມະຕິ.

### ຂ້ອຍສາມາດຈົດຊື່ໄດ້ບໍ?

ຕາມທາງກົດໝາຍທ່ານຕ້ອງຈົດຊື່ຖ້າທ່ານ:

- ມີອາຍຸ 18ປີ ຫຼືຫຼາຍກວ່າ
- ເປັນຄົນສັນຊາດອອສເຕຣລຽນ
- ໄດ້ອາໄສຢູ່ໃນບ່ອນຢູ່ປັດຈຸບັນຂອງທ່ານຢ່າງຕ່ຳນຶ່ງເດືອນ.

ຖ້າທ່ານອາຍຸ 16 ຫຼື 17ປີ, ທ່ານສາມາດຈົດຊື່ໄດ້ຕັ້ງ ແຕ່ດຽວນີ້ເພື່ອວ່າເມື່ອທ່ານມີອາຍຸ 18ປີ ທ່ານກໍຈະພ້ອມທີ່ ຈະປ່ອນບັດເລືອກຕັ້ງ.

### ຂ້ອຍຈະຈົດຊື່ໄດ້ແບບໃດ?

ທ່ານສາມາດຈົດຊື່ໄດ້ທີ່ www.aec.gov.au/enrol.

ທ່ານຍັງສາມາດເຂົ້າຢ້ຽມເບິ່ງຕາມຫ້ອງການຂອງ AEC ຫຼືຫ້ອງການໄປສະນີບ່ອນໃດກໍໄດ້ເພື່ອຂໍເອົາໃບສມັກຈົດຊື່.

### ຂ້ອຍບໍ່ແນ່ໃຈວ່າຂ້ອຍໄດ້ຈົດຊື່ແລ້ວຫຼືຍັງ

ທ່ານສາມາດກວດເບິ່ງການຈົດຊື່ຂອງທ່ານໄດ້ທີ່ www.aec.gov.au/check.

### ຖ້າຂ້ອຍປ່ຽນທີ່ຢູ່/ຊື່ ຂ້ອຍຈະເຮັດຢ່າງໃດ?

ທຸກໆຄັ້ງທີ່ທ່ານຍ້າຍເຮືອນຫຼືປ່ຽນຊື່, ທ່ານຕ້ອງອັບເດດ ການຈົດຊື່ດ້ວຍ ລາຍລະອຽດໃໝ່ຂອງທ່ານ. ທ່ານສາມາດ ປ່ຽນລາຍລະອຽດ ຂອງທ່ານ ທາງອອນໄລນ໌ໄດ້ທີ່ www.aec.gov.au. ນອກນີ້ທ່ານຍັງສາມາດເຂົ້າຢ້ຽມ ເບິ່ງຕາມຫ້ອງການຂອງ AEC ຫຼືຫ້ອງການ ໄປສະນີບ່ອນໃດກໍໄດ້ເພື່ອເອົາໃບສມັກຈົດຊື່.

### ຖ້າຂ້ອຍໄປຕ່າງປະເທດເດ ຂ້ອຍຄວນເຮັດຢ່າງໃດ?

ຖ້າທ່ານໄປຕ່າງປະເທດເພື່ອເຮັດວຽກຫຼືໄປຢູ່ ທ່ານຄວນແຈ້ງໃຫ້ທາງ AEC ຊາບ. ຖ້າວ່າທ່ານຢູ່ຕ່າງປະເທດໃນເວລາທີ່ການເລືອກຕັ້ງຂອງຣັຖບານກາງ ຫຼືການລົງປະຊາມະຕິໄດ້ຖືກປະກາດອອກມາ ທ່ານກໍຄວນແຈ້ງໃຫ້ທາງ AEC ຊາບເຊັ່ນກັນ.

ຖ້າທ່ານບໍ່ແຈ້ງ, ຊື່ຂອງທ່ານອາດຈະຖືກເອົາອອກຈາກ ບັນຊີລາຍຊື່ຜູ້ປ່ອນບັດ ແລະພາດຈາກການປ່ອນບັດໃນການເລືອກຕັ້ງທີ່ຈະມີມາເຖິງ.

ຂໍ້ມູນເພີ້ມຕື່ມມີໄວ້ໃຫ້ທີ່ www.aec.gov.au/overseas.

## ການປ່ອນບັດເລືອກຕັ້ງ

ການເລືອກຕັ້ງຣັຖບານກາງມີຂຶ້ນຢ່າງຕ່ຳຄັ້ງນຶ່ງໃນທຸກໆ ສາມປີ ແລະ ວັນເລືອກຕັ້ງຈະແມ່ນວັນເສົາສເມີ. ທ່ານ ຈະປ່ອນບັດເວລາໃດ ແລະຢູ່ໃສນັ້ນຂຶ້ນຢູ່ກັບວ່າທ່ານຈະຢູ່ໃສໃນວັນເລືອກຕັ້ງ.

### ໃນວັນເລືອກຕັ້ງ

ທ່ານສາມາດປ່ອນບັດເລືອກຕັ້ງໄດ້ຢູ່ທຸກໆສະຖານທີ່ປ່ອນບັດເລືອກຕັ້ງຢູ່ໃນຣັດ ຫຼື ອານາເຂດຂອງທ່ານ. ສະຖານທີ່ປ່ອນບັດຕ່າງໆເປີດເວລາ 8ໂມງເຊົ້າ ແລະ ປິດເວລາ 6ໂມງແລງຕົງ.






ຕົວຢ່າງເຈ້ຍລົງຄະແນນ

ຖ້າທ່ານຢູ່ຕ່າງຣັດຫຼືອານາເຂດ ແລະ ທ່ານບໍ່ໄດ້ປ່ອນບັດກ່ອນ, ທ່ານຈະຕ້ອງປ່ອນບັດຢູ່ສູນປ່ອນບັດໃນຕ່າງຣັດ.

ບັນຊີສະຖານທີ່ ປ່ອນບັດແລະສູນປ່ອນບັດຢູ່ໃນຕ່າງຣັດ ຈະມີໄວ້ໃຫ້ທີ່ www.aec.gov.au ສອງສາມອາທິດກ່ອນວັນເລືອກຕັ້ງ. ຖ້າທ່ານບໍ່ສາມາດໄປບ່ອນປ່ອນບັດໄດ້ ໃນວັນເລືອກຕັ້ງ, ທ່ານສາມາດປ່ອນບັດກ່ອນໄດ້.

### ທາງເລືອກອື່ນໆ

ທ່ານສາມາດປ່ອນບັດກ່ອນບໍ່ວ່າຈະເປັນດ້ວຍໂຕເອງ ຫຼື ໂດຍທາງໄປສະນີຖ້າວ່າໃນເລືອກຕັ້ງນັ້ນທ່ານ:

- ຢູ່ນອກເຂດເລືອກຕັ້ງທີ່ທ່ານໄດ້ຈົດຊື່ປ່ອນບັດ
- ຢູ່ໄກຈາກບ່ອນປ່ອນບັດຫຼາຍກວ່າ 8ກິໂລແມັດ
- ພວມເດີນທາງຢູ່
- ບໍ່ສາມາດອອກຈາກບ່ອນເຮັດວຽກເພື່ອໄປປ່ອນ ບັດໄດ້
- ເຈັບປ່ວຍໜັກ, ບໍ່ແຂງແຮງ ຫຼື ພວມຈະຄອດ ລູກໃນເວລາອັນໃກ້ໆ (ຫຼືພວມດູແລໃຜຜູ້ນຶ່ງທີ່ພວມຢູ່ໃນສະພາບດັ່ງກ່າວ)
- ເປັນຄົນປ່ວຍຢູ່ໂຮງໝໍແລະບໍ່ສາມາດປ່ອນບັດ ຢູ່ໂຮງໝໍໄດ້
- ມີຄວາມເຊື່ອທາງສາສນາທີ່ຫ້າມທ່ານຈາກການໄປບ່ອນປ່ອນບັດ
- ຢູ່ໃນຄຸກເພື່ອຊົດໃຊ້ເວລາຕາມຄຳພິພາກສາຕ່ຳກວ່າສາມ ປີ ຫຼື ຖືກຈຳຈອງໄວ້ແບບອື່ນ
- ເປັນຜູ້ເລືອກງຽບແບບບໍ່ແຈ້ງຊື່
- ມີຄວາມຢ້ານກົວຕໍ່ຄວາມປອດໄພຂອງທ່ານແບບ ສົມເຫດຜົນ

ສູນປ່ອນບັດກ່ອນເປີດໃນອາທິດທີ່ຈະເຖິງວັນເລືອກຕັ້ງແລະ ສະຖານທີ່ແລະເວລາຂອງສູນເຫຼົ່ານີ້ຈະປະກາດຢູ່ທີ່ www.aec.gov.au.

ເພື່ອຈະປ່ອນບັດໂດຍທາງໄປສະນີ ທ່ານສາມາດຂໍ ຟອມທາງອອນໄລນ໌ ຫຼື ໄປເອົາຟອມທີ່ຫ້ອງການ AEC ໄດ້ທຸກແຫ່ງ. AEC ຈະສົ່ງຟອມການປ່ອນບັດ ທາງໄປສະນີຂອງທ່ານໄປໃຫ້ຫຼັງຈາກທີ່ຊື່ຂອງບັນດາຜູ້ສມັກລົງເລືອກຕັ້ງ ໄດ້ຖືກຄັດໄວ້ແລ້ວ.

## ເຮັດໃຫ້ຄະແນນສຽງຂອງທ່ານຖືກນັບ

ໃນການເລືອກຕັ້ງຣັຖບານກາງ, ທ່ານຈະປ່ອນບັດເພື່ອເລືອກເອົາຄົນເພື່ອເປັນໂຕແທນທ່ານຢູ່ໃນສອງ ສະພາຂອງຣັຖບານອອສເຕຣເລັຍ: ສະພາຕ່ຳ ແລະ ສະພາສູງ.

ທ່ານຈະໄດ້ຮັບເຈ້ຍລົງຄະແນນສອງໃບ:

- ເຈ້ຍລົງຄະແນນສີຂຽວສຳລັບລົງຄະແນນເລືອກເອົາຜູ້ຕ່າງໜ້າເຂດທ້ອງຖິ່ນຂອງທ່ານ (ຫຼື ເຂດເລືອກຕັ້ງ) ເຂົ້າໄປເປັນຜູ້ແທນຢູ ສະພາຕ່ຳ, ແລະ
- ເຈ້ຍລົງແນນສີຂາວສຳລັບລົງຄະແນນເລືອກເອົາຜູ້ຕ່າງໜ້າຈາກຣັດ ຫຼື ອານາເຂດຂອງທ່ານເຂົ້າໄປເປັນຜູ້ແທນຢູ່ສະພາສູງ.

ຄຳແນະນຳຕ່າງໆໆກ່ຽວກັບການປ່ອນບັດເລືອກຕັ້ງໄດ້ ຖືກພິມໄວ້ຢູ່ເທິງເຈ້ຍລົງຄະແນນ. ຖ້າທ່ານເຮັດຜິດ ຫຼື ທ່ານບໍ່ແນ່ໃຈວ່າຈະເຮັດຢ່າງໃດ ຈົ່ງຂໍຄວາມຊ່ວຍ ເຫຼືອຈາກເຈົ້າໜ້າທີ່ກຳກັບການເລືອກຕັ້ງ.

## ທ່ານຕ້ອງການຮູ້ຕື່ມບໍ?

ທ່ານສາມາດຮຽນຮູ້ຕື່ມກ່ຽວກັບລະບົບການເລືອກຕັ້ງ ແລະ ກ່ຽວກັບກັບການຈົດຊື່ ແລະ ການປ່ອນບັດ ເລືອກຕັ້ງໄດ້ທີ່ www.aec.gov.au.

ບໍຣິການນາຍພາສາທາງໂທຣະສັບມີໄວ້ບໍຣິການ. ເພື່ອເອົາຂໍ້ມູນກ່ຽວກັບການຈົດຊື່, ການປ່ອນບັດ ເລືອກຕັ້ງ ແລະ ການເລືອກຕັ້ງເປັນ ພາສາລາວ ຈົ່ງໂທຫາໝາຍເລກ 1300 720 153.

ຖ້າທ່ານຫູໜວກ ຫຼື ມີຄວາມພິການທາງຫູ ຫຼື ການເວົ້າ ຈົ່ງຕິດຕໍ່ຫາພວກເຮົາຜ່ານ National Relay Service ກ່ (ບໍຣິການຖ່າຍທອດແຫ່ງຊາດ) (NRS)

- ຜູ້ໃຊ້ TTY ຈົ່ງໂທຫາໝາຍເລກ 13 36 77 ແລ້ວ ຂໍເອົາໝາຍເລກ 13 23 26.
- ຜູ້ໃຊ້ລະບົບເວົ້າແລະຟັງ ໃຫ້ໂທໝາຍເລກ 1300 555 727 ແລ້ວບອກຂໍໝາຍເລກ 13 23 26.
- ຜູ້ທີ່ໃຊ້ອິນເຕີເນັດແບບຖ່າຍທອດໃຫ້ຕໍ່ເຂົ້າຫາ NRS ແລ້ວຂໍເອົາໝາຍເລກ 13 23 26.



Authorised by the Electoral Commissioner, Canberra.